PHU BIA MINING – A MEMBER OF THE PANAUST GROUP OF COMPANIES

7th Floor | Capital Tower | 23 Singha Road | Saysetha District | PO Box 5559 | Vientiane Lao PDR
T: +856 21 268 000 | F: +856 21 268 029 | E: info@panaust.com.au | W: www.panaust.com.au

PHU BIA MINING

**ຂ່າວສານ**

ສໍາລັບອອກຂ່າວວັນທີ 15 ເມສາ 2020

# ບໍລິສັດ ພູເບ້ຍ ມາຍນິງ ມອບເຄື່ອງຊ່ວຍຫາຍໃຈ ໃຫ້ແຂວງ ໄຊສົມບູນ

ໃນວັນທີ 14 ເມສາ, ບໍລິສັດ ພູເບ້ຍ ມາຍນິງ (PBM) ໄດ້ມອບເຄື່ອງຊ່ວຍຫາຍໃຈສອງເຄື່ອງໃຫ້ພະແນກສາທາລະນະສຸກ ແຂວງ ໄຊສົມບູນ. ການບໍລິຈາກດັ່ງກ່າວ ແມ່ນໄດ້ເພີ້ມຕື່ມເຂົ້າໃນການຊ່ວຍເຫຼືອດ້ານອຸປະກອນການແພດຂອງບໍລິສັດມູນຄ່າ US$ 100,000 ໃຫ້ແຂວງ ໄຊສົມບູນ.

ເຄື່ອງຊ່ວຍຫາຍໃຈດັ່ງກ່າວ ໄດ້ສົ່ງມອບໃຫ້ຕາງໜ້າຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ຈາກທີມແພດຂອງບໍລິສັດ ພູເບ້ຍ ມາຍນິງ ແລະ ຈະສົ່ງຕໍ່ໄປຍັງໂຮງໝໍແຂວງ.

ນອກຈາກການຊ່ວຍເຫຼືອດ້ານອຸປະກອນການແພດມູນຄ່າ US$ 100,000 ໃຫ້ແຂວງແລ້ວ, ບໍລິສັດ ພູເບ້ຍ ມາຍນິງ ຍັງຈະສະໜັບສະໜຸນອຸປະກອນການແພດມູນຄ່າ US$500,000 ໃຫ້ລັດຖະບານ ລາວຢູ່ສູນກາງຕື່ມອີກ. ການບໍລິຈາກທັງສອງ ຈະສົ່ງຕໍ່ຜ່ານການຈັດຊື້ອຸປະກອນຊ່ວຍເຫຼືອທາງການແພດທີ່ຈໍາເປັນ. ບໍລິສັດ ກໍາລັງເຮັດວຽກຮ່ວມກັບລັດຖະບານ ລາວ ເພື່ອກໍານົດອຸປະກອນ ແລະ ເຄື່ອງມືການແພດທີ່ຕ້ອງການ.

ທ່ານ ຈັນເພັງ ບຸນນະຜົນ, ປະທານ ບໍລິສັດ ພູເບ້ຍ ມາຍນິງກ່າວກ່ຽວກັບຄວາມມຸ່ງໝັ້ນຂອງບໍລິສັດ ເພື່ອຊ່ວຍປະເທດ ລາວໃນການປ້ອງກັນ COVID-19.

"ບໍລິສັດ ແມ່ນມຸ່ງໝັ້ນສະໜັບສະໜຸນລັດຖະບານ ແລະ ປະຊາຊົນລາວ ທ່າມກາງການລະບາດຂອງພະຍາດທີ່ເກີດຕໍ່ເນື່ອງ. ການບໍລິຈາກເຄື່ອງຊ່ວຍຫາຍໃຈສອງເຄື່ອງດັ່ງກ່າວ ຈະຕອບສະໜອງຕໍ່ການສະໜັບສະໜຸນລະບົບການເບິ່ງແຍງຄົນເຈັບຂອງແຂວງໄຊສົມບູນທັນທີ.

ທ່ານ ປະທານກ່າວຕື່ມວ່າ: "ບໍລິສັດ ຈະສືບຕໍ່ຕິດຕາມສະຖານະການທີ່ກໍາລັງເກີດຂຶ້ນນີ້ຢ່າງຈິງຈັງຫຼາຍ ແລະ ຈະປຶກສາຫາລືແບບເປີດໃຈ ແລະ ເຮັດວຽກຮ່ວມນໍາລັດຖະບານ ລາວ ເພື່ອຮັບປະກັນວ່າສິ່ງໃດທີ່ບໍລິສັດ ສາມາດຊ່ວຍໄດ້ ເພື່ອຮັບມືກັບສິ່ງທ້າທາຍຂອງການລະບາດຂອງພະຍາດ COVID-19."

2019 WINNER
AUSTMINE MINER INNOVATION AWARD

2018 WINNER
FRIEND OF LAOS
2018 WINNER
FRIEND OF ASEAN AWARDS

2018 WINNER
ASEAN OSHNET EXCELLENCE AWARD
OHS MANAGEMENT

2017
LAO PDR LABOUR ORDER MEDAL
2011
LAO PDR LABOUR ORDER MEDAL CLASS 1
POVERTY REDUCTION

2015 WINNER
AUSTRALIAN CLIMATE LEADERSHIP AWARDS
MOST PROFITABLE CARBON REDUCTION ACTIVITY




*ຂ້າງເທິງ: ຕາງໜ້າຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ແຂວງ ໄຊສົມບູນ ຮັບເຄື່ອງຊ່ວຍຫາຍໃຈຈາກທີມແພດປະຈຳສະໜາມໂຮງງານຂຸດຄົ້ນ-ປຸງແຕ່ງທອງ-ຄຳ ພູຄຳ.*

**For further information please contact:**


Keoleuthsamay Thammalangsy
T: 020 268 000
E: keoleutsamay.thammalangsy@pbm.panaust.com

Phomvihane Thiepphougphane
T: 021 268 000
E: Phomvihane.Thiepphougphane@pbm.panaust.com